ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສູນກາງແນວລາວສ້າງຊາດ
ຄະນະປະຈໍາ

ເລກທີ 55 /ຄປຈ
ນະຄອນຫຼວງວຽງຈັນ, ວັນທີ 4.02.2023

## ມະຕິ
## ກ່ຽວກັບວຽກງານການສ້າງລາຍຮັບເພີ່ມ ຂອງແນວລາວສ້າງຊາດ ໃນໄລຍະໃໝ່

ໃນໄລຍະຫຼາຍປີຜ່ານມາ ໄປພ້ອມກັບການປະຕິບັດໜ້າທີ່ການເມືອງຂອງຕົນ, ອົງການແນວລາວສ້າງຊາດທຸກຂັ້ນໄດ້ພະຍາຍາມປະຕິບັດແຜນນະໂຍບາຍຂອງພັກ-ລັດກ່ຽວກັບການເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ໂດຍໄດ້ເຄື່ອນໄຫວຫຼາຍຮູບຫຼາຍສີເພື່ອສ້າງລາຍຮັບສ້າງກອງທຶນປະເພດຕ່າງໆ ໃຫ້ອົງການຂອງຕົນມີລາຍຮັບເພີ່ມສ່ວນໃດສ່ວນໜຶ່ງ ເພື່ອອໍານວຍຄວາມສະດວກໃຫ້ການເຄື່ອນໄຫວວຽກງານມີໝາກຜົນຕະຫຼອດມາ.

ໃນເງື່ອນໄຂໃໝ່ຂອງພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດ ເພື່ອຮັບປະກັນໃຫ້ການສືບຕໍ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ກໍຄືມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງແນວລາວສ້າງຊາດ ຕາມທິດສ້າງຄວາມເຂັ້ມແຂງ ແລະ ສ້າງການຫັນປ່ຽນໃໝ່ໃນວຽກງານແນວລາວສ້າງຊາດໃຫ້ປະກົດຜົນເປັນຈິງ, ແນວລາວສ້າງຊາດແຕ່ລະຂັ້ນ ຍິ່ງຕ້ອງໄດ້ເປັນເຈົ້າການຂຸດຄົ້ນລາຍຮັບເພີ່ມ ທີ່ບໍ່ຜິດກົດໝາຍ ເພື່ອຮັບໃຊ້ການເຄື່ອນໄຫວທີ່ຈໍາເປັນຂອງຕົນ.

### I. ຕີລາຄາສະພາບການສ້າງລາຍຮັບ ແລະ ປະເພດກອງທຶນແນວລາວສ້າງຊາດຜ່ານມາ.

#### ກ. ສະພາບຜ່ານມາ.

ໃນໄລຍະຜ່ານມາ, ຄະນະກໍາມະການແນວລາວສ້າງຊາດ ໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ນໍາໃຊ້ນະໂຍບາຍການສ້າງລາຍຮັບເພີ່ມປະເພດຕ່າງໆ ເພື່ອຊ່ວຍໜູນໃຫ້ການເຄື່ອນໄຫວປະຕິບັດໜ້າທີ່ການເມືອງຂອງຕົນໂດຍມີເປົ້າໝາຍ ປະກອບສ່ວນເຂົ້າໃນວຽກງານແກ້ໄຂຄວາມທຸກຍາກຂອງປະຊາຊົນເຊັ່ນ: ໄດ້ສ້າງຕັ້ງກອງທຶນພັດທະນາຂັ້ນບ້ານຈໍານວນໜຶ່ງ ແລະ ກຸ່ມທ້ອນໂຮມເງິນຂັ້ນບ້ານ (ປີ 2003); ກອງທຶນສາມັກຄີເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນໃນເຂດຊົນເຜົ່າຕ່າງໄກສອກຫຼີກ, ກອງທຶນສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນຂອງພະນັກງານແນວລາວສ້າງຊາດຂັ້ນຕ່າງໆ ແລະ ໃນສະໄໝທີ X ໄດ້ລິເລີ່ມສ້າງຕັ້ງກອງທຶນບ້ານສາມັກຄີໂດຍມີການຮ່ວມມືລະຫວ່າງ ສູນກາງແນວລາວສ້າງຊາດ ກັບກຸ່ມບໍລິສັດພົງສະຫວັນ ຈໍາກັດ. ນອກຈາກນັ້ນຍັງໄດ້ປຸກລະດົມນັກທຸລະກິດ, ຜູ້ໃຈບຸນ, ມູນນິທິ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຊ່ວຍເຫຼືອສັງຄົມສົງເຄາະສະເພາະກິດ ຂອງອົງການແນວລາວສ້າງຊາດ.

ຂ. ຈຸດດີ ແລະຈຸດອ່ອນຂອງການສ້າງລາຍຮັບເພີ່ມ ແລະການສ້າງກອງທຶນໄລຍະຜ່ານມາ.

- ຈຸດດີ:

+ ລາຍຮັບເພີ່ມ ແລະ ກອງທຶນຕ່າງໆທີ່ແນວລາວສ້າງຊາດໄດ້ຈັດຕັ້ງນຳພາໃນໄລຍະຜ່ານມາເປັນສ່ວນປະກອບໜຶ່ງເຂົ້າໃນພາລະກິດລວມຂອງພັກ-ລັດ ຂັ້ນຕ່າງໆ ໃນວຽກງານແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າຢູ່ທ້ອງຖິ່ນ, ເປັນຕົ້ນ: ສະໜັບສະໜູນປະຊາຊົນໃຫ້ສາມາດເຂົ້າເຖິງແຫຼ່ງທຶນແບບງ່າຍດາຍເພື່ອທຳການຜະລິດ, ປະກອບສ່ວນຍົກສູງລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ;

+ ບາງກອງທຶນໄດ້ປະກອບສ່ວນເຂົ້າໃນການສ້າງເສດຖະກິດຄອບຄົວ, ແກ້ໄຂຄວາມຫຍຸ້ງຍາກໃນເວລາຂັດສົນ ເພື່ອປັບປຸງຊີວິດການເປັນຢູ່ຂອງພະນັກງານ-ລັດຖະກອນ ຂອງແນວລາວສ້າງຊາດ;

+ ກອງທຶນສາມັກຄີ ຕາມຕົວແບບຂອງກຸ່ມບໍລິສັດພົງສະຫວັນ ເປັນການປະກອບສ່ວນຊຸກຍູ້ ແລະສົ່ງເສີມການສ້າງບ້ານພັດທະນາ, ການພັດທະນາຊົນນະບົດຕິດພັນໂດຍກົງກັບການສ້າງຄວາມສາມັກຄີປອງດອງໃນທ້ອງຖິ່ນ, ທັງການຜະລິດກະສິກຳເປັນສິນຄ້າຕິດພັນກັບການບໍລິການ-ການທ່ອງທ່ຽວ ອັນໄດ້ປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ແລະ ຂອງຊາດ ຢ່າງຕັ້ງໜ້າ.

- ຈຸດອ່ອນ:

+ ການສ້າງລາຍຮັບເພີ່ມ ຜ່ານມາ, ການເຄື່ອນໄຫວຂອງກອງທຶນພັດທະນາຂັ້ນບ້ານ ຍັງຂາດນິຕິກຳ, ຂາດການຕິດຕາມປະເມີນຜົນ, ເຮັດໃຫ້ການເຄື່ອນໄຫວບໍ່ຍືນຍົງ, ສ່ວນໃຫຍ່ພົບຄວາມຫຍຸ້ງຍາກ, ເກີດມີໜີ້ສິນຄຸມເຄືອຕາມມາ;

+ ກອງທຶນບ້ານສາມັກຄີແນວລາວສ້າງຊາດທີ່ຮ່ວມກັບກຸ່ມບໍລິສັດພົງສະຫວັນ ຈຳກັດ ເປັນໜໍ່ແໜງທີ່ດີ, ແຕ່ການຖອດຖອນບົດຮຽນດ້ານດີ, ດ້ານອ່ອນ ຊັກຊ້າ, ເຮັດໃຫ້ການເສີມຂະຫຍາຍຄວາມຄືບໜ້າດ້ານດີຊັກຊ້າເຮັດໃຫ້ປະຊາຊົນ ແລະ ອົງການປົກຄອງທ້ອງຖິ່ນ ຍັງມີຄວາມກັງວົນຕໍ່ການໃຊ້ແທນໜີ້ສິນ.

+ ບາງທ້ອງຖິ່ນການເຄື່ອນໄຫວຊຸກຍູ້ວຽກງານການສ້າງລາຍຮັບເພີ່ມງົບປະມານຂອງລັດ, ວຽກງານກອງທຶນ ຂອງແນວລາວສ້າງຊາດ ຍັງບໍ່ທັນເປັນຮູບປະທຳ, ເຮັດໃຫ້ການເຄື່ອນໄຫວທີ່ຈຳເປັນຂອງຄະນະກຳມະການແນວລາວ ຢູ່ບ່ອນນັ້ນຈຳກັດ ແລະ ບໍ່ເຂັ້ມແຂງເທົ່າທີ່ຄວນ.

ຄ. ບົດຮຽນທີ່ຖອດຖອນໄດ້:

1) ບ່ອນໃດມີລາຍຮັບ ຫຼື ມີທຶນສະໜັບສະໜູນ ຢູ່ບ່ອນນັ້ນປະຊາຊົນ ກໍມີຄວາມສາມັກຄີ, ການຊ່ວຍເຫຼືອຄອບຄົວທຸກຍາກກໍເຮັດໄດ້ໄວກວ່າປົກກະຕິ ແລະ ເຂດນັ້ນກໍ່ມີການພັດທະນາດີຂຶ້ນ. ພ້ອມດຽວກັນນັ້ນການຈັດຕັ້ງນຳພາການເຄື່ອນໄຫວກອງທຶນດັ່ງກ່າວໄດ້ດີ ເຖິງວ່າຈະເປັນເມັດເງິນບໍ່ຫຼາຍ ແຕ່ສຳລັບປະຊາຊົນຄົນທຳມະດາຈະໄດ້ຮັບຜົນປະໂຫຍດສູງ ແລະ ກົງກັນຂ້າມຖ້າການບໍລິຫານຄຸ້ມຄອງກອງທຶນເຮັດບໍ່ໄດ້ດີຈະເຮັດໃຫ້ກອງທຶນຂາດທຶນ, ສະມາຊິກ, ປະຊາຊົນມີໜີ້ສິນລົ້ມລະລາຍ ແລະ ຂາດຄວາມສາມັກຄີໃນບ້ານ.

2) ໃນເງື່ອນໄຂການສ້າງລັດທີ່ປົກຄອງດ້ວຍກົດໝາຍ ຈະແມ່ນການສ້າງກອງທຶນຕ່າງໆ ການສ້າງລາຍຮັບເພີ່ມຂອງແນວລາວສ້າງຊາດກໍຕ້ອງມີມະຕິ, ມີຂໍ້ຕົກລົງ (ນິຕິກຳ )ຂອງສູນກາງແນວລາວສ້າງຊາດ ແລະຕ້ອງມີການສະໜັບສະໜູນຈາກການຈັດຕັ້ງພັກ-ລັດບ່ອນນັ້ນໆ ຢ່າງເປັນລາຍລັກອັກສອນ.

3) ສະເພາະການຄຸ້ມຄອງບໍລິຫານກອງທຶນຂອງແນວລາວສ້າງຊາດ ສ້າງຕັ້ງຂຶ້ນຕ້ອງມີກົດລະບຽບ, ແຜນການ, ແຜນງານ, ມີການນຳພາ-ຊີ້ນຳ, ຈັດຝຶກອົບຮົມໃຫ້ຄະນະຮັບຜິດຊອບກອງທຶນຢ່າງເປັນລະບົບຕໍ່

ເປື່ອງ, ມີການປະສານສົມທົບກັນຢ່າງແໜ້ນແຟ້ນ ລະຫວ່າງ ຄະນະບໍລິຫານກອງທຶນ, ຄະນະທີ່ປຶກສາ ແລະ ຄະນະກວດກາ ໃນການເຄື່ອນໄຫວຂອງກອງທຶນແມ່ນມີປະສິດທິພາບ, ໂປ່ງໃສ ແລະ ທັງຕ້ອງຍ້ອງຍໍ ຕໍ່ຄະນະຮັບຜິດຊອບຜູ້ທີ່ມີຜົນງານ, ມີການປະຕິບັດວິໄນຕໍ່ຜູ້ກະທຳຜິດ ຢ່າງຖືກຕ້ອງຕາມລະບຽບການ.

## II. ທິດທາງໜ້າທີ່, ແຜນວຽກ ແລະຮູບການສົ່ງເສີມການສ້າງລາຍຮັບ.

### ກ. ບ່ອນອີງ:

- ອີງໃສ່ພາລະບົດບາດ, ສິດໜ້າທີ່ ແລະ ຄວາມຮຽກຮ້ອງຕ້ອງການ ໃນການປະຕິບັດໜ້າທີ່ການເມືອງ, ຊຶ່ງແນວລາວສ້າງຊາດ ເປັນອົງການຕົ້ນໂຮມຄວາມສາມັກຄີປອງດອງ ຄວາມເປັນປຶກແຜ່ນຂອງປະຊາຊົນບັນດາເຜົ່າ.

- ອີງຕາມ ສະພາບຕົວຈິງຂອງຖານະການເງິນຂອງອົງການແນວລາວສ້າງຊາດ ກໍຄືສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນຂອງພັກ ທີ່ລັດສະໜອງໃຫ້ອາດບໍ່ພຽງພໍຕາມຄວາມຕ້ອງການໃຊ້ຈ່າຍທີ່ຈຳເປັນ ເພື່ອໄຂຊ່ອງທາງໃຫ້ອົງການເຫຼົ່ານັ້ນ ສາມາດເຄື່ອນໄຫວດີຂຶ້ນ, ພັກ-ລັດ ມີນະໂຍບາຍສົ່ງເສີມໃຫ້ອົງການເຫຼົ່ານັ້ນໃນຖານະເປັນອົງການການເມືອງ-ສັງຄົມ ສາມາດຊອກຫາລາຍຮັບທີ່ບໍ່ຜິດກົດໝາຍ, ການສ້າງລາຍຮັບເພີ່ມນີ້ແມ່ນດຳເນີນການບົນຈິດໃຈຂອງມະຕິ 108/ກມສພ ແລະ ມາດຕາ 37 ຂອງກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບປີ 2018.

- ໃນຕໍ່ໜ້າອົງການແນວລາວສ້າງຊາດທຸກຂັ້ນມີໜ້າທີ່ ແລະ ພັນທະຕ້ອງເພີ່ມທະວີຄວາມຮັບຜິດຊອບຂອງຕົນເຂົ້າໃນການຊອກຫາລາຍຮັບເພີ່ມເພື່ອປະກອບເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາ ແລະ ການເຄື່ອນໄຫວທີ່ຈຳເປັນຂອງຕົນ.

### ຂ. ທິດທາງ, ແຜນວຽກ ແລະ ຮູບການໆສ້າງລາຍຮັບໃນໄລຍະໃໝ່

**1. ທິດທາງການສ້າງລາຍຮັບເພີ່ມ:**

+ ລາຍຮັບ-ລາຍຈ່າຍພື້ນຖານຂອງແນວລາວສ້າງຊາດ ແມ່ນໄດ້ມາຈາກລາຍຮັບ ແລະ ເປັນໄປຕາມລະບຽບການໃຊ້ຈ່າຍງົບປະມານຂອງລັດ, ໂດຍແມ່ນລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຂອງຕົນ ເປັນຜູ້ຕອບສະໜອງ ໃຫ້ທັງໃນດ້ານການກໍ່ສ້າງພື້ນຖານໂຄງລ່າງ, ການບໍລິຫານ, ວິຊາການ ແລະ ສະຫວັດດີການສັງຄົມ, ຊຶ່ງແນວລາວສ້າງຊາດຂັ້ນນັ້ນເປັນຜູ້ຄົ້ນຄວ້ານຳສະເໜີແຜນການສ້າງ, ຄຸ້ມຄອງ ແລະ ນຳໃຊ້ ລາຍຮັບ-ລາຍຈ່າຍ ຕາມລະບຽບການຂອງລັດ.

+ ໄປພ້ອມໆກັບລາຍຮັບທີ່ລັດສະໜອງໃຫ້ ໃນແຕ່ລະປີແລ້ວ ສ່ວນທີ່ຍັງບໍ່ພຽງພໍກັບຄວາມຮຽກຮ້ອງຕ້ອງການທີ່ຈຳເປັນ, ອົງການແນວລາວສ້າງຊາດ ແຕ່ລະຂັ້ນ ມີໜ້າທີ່ຄົ້ນຄວ້ານຳສະເໜີລາຍຮັບ-ລາຍຈ່າຍເພີ່ມ ຂອງອົງການຕົນ ຕາມທິດສ້າງການຫັນປ່ຽນໃນການແກ້ໄຂຄວາມຫຍຸ້ງຍາກຕົ້ນຕໍໃນປັດຈຸບັນຂອງອົງການແນວລາວສ້າງຊາດ ບົນຈິດໃຈເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງຂຶ້ນຕື່ມ, ຊຶ່ງລາຍຮັບ-ລາຍຈ່າຍເພີ່ມດັ່ງກ່າວຕ້ອງເລັ່ງໃສ່: ບຸກລະຄົນ, ຊຸກຍູ້ນັກທຸລະກິດທີ່ເປັນກຳມະການ, ເປັນທີ່ປຶກສາ ແລະ ຄູ່ຮ່ວມງານຂອງແນວລາວສ້າງຊາດແຕ່ລະຂັ້ນ ໃຫ້ດຳເນີນທຸລະກິດ ບໍ່ພຽງແຕ່ເປັນບໍລິສັດທຳມະດາ ຫາກຍັງຕ້ອງເປັນຜູ້ຫ້າວຫັນ ແລະ ເປັນບໍລິສັດທີ່ປະຕິບັດ "ຂະບວນການນັກທຸລະກິດດີເດັ່ນ" ແລະ ປະຕິບັດໄດ້ລື່ນຄາດໝາຍຂອງແຜນປີ, ຊຶ່ງສ່ວນເກີນແຜນ ທີ່ບໍລິສັດປະຕິບັດໄດ້ນັ້ນ ກຳມະການ, ທີ່ປຶກສາ ແລະ ຄູ່ຮ່ວມງານ ແນວລາວສ້າງຊາດທ່ານນັ້ນ ຫັກເອົາສ່ວນໜ້ອຍໜຶ່ງ ຕາມຄວາມສະໝັກໃຈຂອງຕົນ ເຂົ້າ

ເປັນລາຍຮັບ (ຄັງ ຫຼື ກອງທຶນ) ຂອງແນວລາວສ້າງຊາດຂັ້ນນັ້ນໆ, ໂດຍຄະນະປະຈຳສູນກາງແນວລາວສ້າງຊາດ ແລະ ທ້ອງຖິ່ນນັ້ນໆ ຈະຈາລຶກ **"ຄຸນງາມຄວາມດີ"** ແລະ ສະເໜີລັດຖະບານ ແລະ ອົງການປົກຄອງພິຈາລະນາຍ້ອງຍໍບັນດາທ່ານເຫຼົ່ານັ້ນ ໃນແຕ່ລະປີ ແລະ 5 ປີຕາມລະບຽບການຂອງລັດ.

+ ໃຫ້ເພີ່ມທະວີສ້າງຄູ່ຮ່ວມງານກັບນັກທຸລະກິດ, ຜູ້ປະກອບການ, ຜູ້ຊົງຄຸນວຸດທິ, ຜູ້ໃຈບຸນ ທັງຢູ່ພາຍໃນ ແລະ ຕ່າງປະເທດທີ່ສະໝັກໃຈເຂົ້າຮ່ວມພາລະກິດສ້າງສາປະເທດຊາດຕາມນະໂຍບາຍຂອງພັກ-ລັດ, ປະຕິບັດຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາຕາມຄວາມຮຽກຮ້ອງຕ້ອງການທີ່ເລັ່ງດ່ວນຄື: ລະດົມການຊ່ວຍເຫຼືອສະເພາະກິດບັນເທົາທຸກ ຜູ້ຖືກເຄາະຮ້າຍ, ໄພພິບັດທຳມະຊາດ. ໂດຍໃຫ້ອົງການແນວລາວສ້າງຊາດແຕ່ລະຂັ້ນ ບັນທຶກມູນຄ່າການຊ່ວຍເຫຼືອແຕ່ລະຄັ້ງ ແລະ ເປັນຜູ້ຄົ້ນຄວ້ານຳສະເໜີອົງການລັດໃຫ້ການຍ້ອງຍໍຕາມລະບຽບການ.

+ ສົ່ງເສີມການຊ່ວຍເຫຼືອ ຊຶ່ງກັນ ແລະກັນ ຢູ່ພາຍໃນອົງການແນວລາວສ້າງຊາດ (ພະນັກງານຜູ້ປະຈຳການ ແລະບໍ່ປະຈຳການ) ຕາມຄວາມສະໝັກໃຈ ແລະເງື່ອນໄຂຄວາມສາມາດຂອງແຕ່ລະບ່ອນ, ແຕ່ລະສຳນັກງານ, ຫ້ອງການ, ກົມກອງ. ພ້ອມດຽວກັນນັ້ນກໍຕ້ອງສົ່ງເສີມການຮ່ວມມື ແລະ ຊ່ວຍເຫຼືອລະຫວ່າງອົງການພາຄີດ້ວຍກັນ ນັບແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ, ບົນພື້ນຖານ 4 ຮ່ວມ ຂອງ 5 ອົງການ (ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ສະຫະພັນກຳມະບານລາວ, ສະຫະພັນແມ່ຍິງລາວ, ຊາວໜຸ່ມປະຊາຊົນປະຕິວັດລາວ).

+ ຕັ້ງໜ້າຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ ໂຄງການ **"ສ້າງກອງທຶນສາມັກຄີ ແລະ ພັດທະນາ"** ຂອງແນວລາວສ້າງຊາດ ຕາມບົດຮຽນ ສະໄໝທີ X ແລະ ມະຕິ XI ຂອງກອງປະຊຸມໃຫຍ່ຜູ້ແທນແນວລາວສ້າງຊາດທົ່ວປະເທດ ທີ່ກຳນົດໄວ້ໃຫ້ກາຍເປັນວຽກງານບຸກທະລຸ ຫຼື ສ້າງການຫັນປ່ຽນໃໝ່ຂອງຄະນະກຳມະການແນວລາວສ້າງຊາດທຸກຂັ້ນໃນຕໍ່ໜ້າ.

**2. ແໜວຽກ ແລະ ຮູບການສ້າງລາຍຮັບເພີ່ມທີ່ຖືກກົດໝາຍ ຂອງອົງການແນວລາວສ້າງຊາດ**

**1) ແໜວຽກ ແລະ ຮູບການນຳໃຊ້ງົບປະມານຂອງລັດ.**

- ຄະນະກຳມະການແນວລາວສ້າງຊາດຂັ້ນຕ່າງໆ ເປັນຜູ້ຫົວຫັນປຸກລະດົມຂົນຂວາຍປະຊາຊົນປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ປະຕິບັດລາຍຮັບຂອງອົງການປົກຄອງຂັ້ນຂອງຕົນໃຫ້ເກີນແຜນ ໂດຍເອົາໄສລາຍຮັບເກີນແຜນສະເໜີອົງການປົກຄອງຂັ້ນນັ້ນໆ ເພີ່ມເຕີມລາຍຮັບໃຫ້ແນວລາວສ້າງຊາດກໍຄືໃຫ້ ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນຂັ້ນຂອງຕົນ.

- ລາຍຮັບຂອງອົງການແນວລາວສ້າງຊາດ ທີ່ໄດ້ມາຈາກງົບປະມານຂອງລັດຈັດສັນໃຫ້ ແມ່ນຮັດໜ້າທີ່ໃນການສະໜັບສະໜູນ ແລະ ຈັດຕັ້ງປະຕິບັດໂຄງການ, ກິດຈະການຂອງແຜນພັດທະນາທີ່ມະຕິກອງປະຊຸມໃຫຍ່ຂອງຂັ້ນຕົນກຳນົດໄວ້, ໃນນັ້ນໜ້າທີ່ຂອງງົບປະມານລັດແມ່ນເລັ່ງໃສ່ການກໍ່ສ້າງພື້ນຖານໂຄງລ່າງ ແລະ ຕ້ອງຮັບປະກັນສາລະບານລາຍຈ່າຍຕາມລະບຽບການຂອງກົດໝາຍງົບປະມານກຳນົດ.

**2) ແໜວຽກ ແລະ ຮູບການລາຍຮັບທີ່ໄດ້ມາຈາກການສ້າງຄຸນງາມຄວາມດີຂອງນັກທຸລະກິດທີ່ເປັນກຳມະການ, ທີ່ປຶກສາ ແລະ ຄູ່ຮ່ວມງານ.**

- ເປົ້າໝາຍນຳໃຊ້ໃຫ້ນຳໄປສະໜັບສະໜູນໂຄງການ, ກິດຈະການດ້ານໂຄງລ່າງ ແລະ ດ້ານວິຊາການ ຂອງແຜນພັດທະນາ 5 ປີ ທີ່ງົບປະມານຂອງລັດບໍ່ພຽງພໍ.

• ແຜນວຽກການສ້າງລາຍຮັບພື້ນຂອງນັກທຸລະກິດທີ່ເປັນກຳມະການ, ທີ່ປຶກສາ ແລະ ຄູ່ຮ່ວມງານ ແມ່ນອົງການແນວລາວສ້າງຊາດຂັ້ນຕ່າງໆ ເປັນຜູ້ຊຸກຍູ້ໜູນໃຫ້ຫົວໜ່ວຍທຸລະກິດດັ່ງກ່າວສາມາດເຄື່ອນໄຫວສ້າງລາຍຮັບໄດ້ເກີນແຜນທີ່ອົງການອຳນາດລັດກຳນົດໃຫ້ ໂດຍປຸກລະດົມຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໃນທົ່ວກຸ່ມແຖວກຳມະການ, ພະນັກງານ ຂອງວິສາຫະກິດ, ຫົວໜ່ວຍທຸລະກິດຕ່າງໆ ຈັດຕັ້ງປະຕິບັດວຽກງານສ້າງລາຍຮັບໃຫ້ບໍລິສັດລື່ນຄາດໝາຍ ຫຼື ມີກຳໄລຫຼາຍຂຶ້ນ.

**3) ແຜນວຽກ ແລະ ຮູບການລາຍຮັບທີ່ໄດ້ມາຈາກການປະກອບສ່ວນແບບສະໝັກໃຈຂອງປະຊາຊົນ, ມູນນິທິພາຍໃນ ແລະ ຕ່າງປະເທດ.**

• ເປົ້າໝາຍນຳໄປສະໜັບສະໜູນໂຄງການຊ່ວຍເຫຼືອລ້າ ຕາມເປົ້າໝາຍຂອງແຜນພັດທະນາ ທີ່ອົງການແນວລາວສ້າງຊາດ ແລະ ອົງການປົກຄອງທ້ອງຖິ່ນກຳນົດໄວ້ແຕ່ຕ້ອງໄດ້ຮັບການເຫັນດີຈາກອົງກອນ ຫຼື ມູນນິທິນັ້ນ.

• ແຜນວຽກ ແລະ ຮູບການສຳຄັນ: ຄະນະກຳມະການແນວລາວສ້າງຊາດຂັ້ນນັ້ນ ເປັນຜູ້ຄົ້ນຄວ້າໂຄງການ, ກິດຈະການທີ່ຈຳເປັນເລັ່ງດ່ວນ (ໄພພິບັດ, ຄວາມທຸກຍາກ, ບັນຫາກະທົບຕໍ່ຄວາມສາມັກຄີປອງດອງ) ນຳມາພິຈາລະນາຕົກລົງຕາມລະບຽບການ ແລະ ປຸກລະດົມການປະກອບສ່ວນ.

4) ແຜນວຽກ ແລະ ຮູບການການສ້າງລາຍຮັບທີ່ໄດ້ມາຈາກກອງທຶນສາມັກຄີ ຕາມທີ່ເຄີຍປະຕິບັດຜ່ານມາ ຂອງອົງການແນວລາວສ້າງຊາດ ແລະ ລາຍຮັບຈາກການຮ່ວມມືຂອງອົງການພາຄີ ໃຫ້ນຳໃຊ້ເຂົ້າໃນວຽກງານ ແລະ ກິດຈະການສະເພາະຂອງກອງທຶນດັ່ງກ່າວ, ໂດຍແມ່ນສະມາຊິກ ແລະ ອົງການກ່ຽວຂ້ອງຂອງກອງທຶນດັ່ງກ່າວພິຈາລະນາຕົກລົງເອົາເອງ.

**5) ແຜນວຽກ ແລະ ຮູບການລາຍຮັບທີ່ໄດ້ມາຈາກກອງທຶນ ຫຼື ມູນນິທິສາມັກຄີ ແລະ ພັດທະນາ.**

• ເປົ້າໝາຍລາຍຮັບຈາກ **"ກອງທຶນ ຫຼື ມູນນິທິສາມັກຄີ ແລະ ພັດທະນາ"** ມີໜ້າທີ່ສະໜອງທຶນໃຫ້ກຳມະການ, ທີ່ປຶກສາ, ຄູ່ຮ່ວມງານ ແລະ ແນວລາວສ້າງຊາດຂັ້ນຕ່າງໆ ຫຼື ນອກຈາກອົງການແນວລາວສ້າງຊາດ ເພື່ອປະຕິບັດໂຄງການໃດໜຶ່ງທີ່ເຫັນວ່າມີຜົນປະໂຫຍດໃຫ້ການພັດທະນາ ແລະ ສ້າງຄວາມສາມັກຄີປອງດອງຂອງຊຸມຊົນ, ທ້ອງຖິ່ນໃດໜຶ່ງ ແລະ ສ້າງຄວາມເຂັ້ມແຂງໃຫ້ການເຄື່ອນໄຫວວຽກງານຂອງແນວລາວສ້າງຊາດ.

## III. ໂຄງການສ້າງ "ກອງທຶນ ຫຼື ມູນນິທິສາມັກຄີ ແລະ ພັດທະນາ" ຂອງແນວລາວສ້າງຊາດ ໃນໄລຍະໃໝ່

### ກ. ເຫດຜົນ ແລະ ຈຸດປະສົງຄາດໝາຍໃນການສ້າງກອງທຶນ ຫຼື ມູນນິທິ

(1). ການສ້າງຕັ້ງກອງທຶນ ຫຼື ມູນນິທິ ເປັນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XI ຂອງແນວລາວສ້າງຊາດ, ແມ່ນການຫັນເອົາມະຕິ 108/ກມສພ ແລະ ແຜນພັດທະນາແນວລາວສ້າງຊາດ 5 ປີ (2021-2025) ເຂົ້າສູ່ພາກປະຕິບັດຕົວຈິງ, ທັງເປັນການປະຕິບັດກົດໝາຍ ວ່າດ້ວຍແນວລາວສ້າງຊາດ ທີ່ກຳນົດໄວ້ ມາດຕາ 37.

(2). ໃນໄລຍະຜ່ານມາອົງການແນວລາວສ້າງຊາດໄດ້ສ້າງກອງທຶນສາມັກຄີ ແລະ ພັດທະນາ ເປັນພາກສ່ວນໜຶ່ງໃນຂະບວນການສ້າງຄອບຄົວ ແລະ ບ້ານສາມັກຄີປອງດອງ, ກອງທຶນ ຈະເປັນປັດໄຈທີ່ສຳຄັນເຮັດໃຫ້ເກີດຄວາມສາມັກຄີ, ນຳເອົາຜົນປະໂຫຍດມາໃຫ້ປະຊາຊົນ ແລະ ແນວລາວສ້າງຊາດຂັ້ນຕ່າງໆ; ເພື່ອ

ຮັບປະກັນໃຫ້ອົງການແນວລາວສ້າງຊາດມີທຶນທີ່ໝັ້ນຄົງ ແລະ ຕໍ່ເນື່ອງ, ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ກຳມະການ, ທີ່ປຶກສາ ແລະ ຄູ່ຮ່ວມງານ ແນວລາວສ້າງຊາດຂັ້ນສູນກາງ ແລະ ທ້ອງຖິ່ນ ສາມາດເຄື່ອນໄຫວວຽກງານຂອງແນວລາວສ້າງຊາດໄດ້ຢ່າງແຂງແຮງ, ກວ້າງຂວາງກວ່າເກົ່າ ແລະ ຕໍ່ເນື່ອງ;

(3). ແນວລາວສ້າງຊາດ ແມ່ນອົງການຈັດຕັ້ງສຳພັນທາງການເມືອງ-ສັງຄົມ, ມີພາລະບົດບາດ ແລະ ໜ້າທີ່ໃນການເຕົ້າໂຮມຄວາມສາມັກຄີປອງດອງປວງຊົນທົ່ວຊາດ, ເປັນຜູ້ປຸກລະດົມ ແລະ ຂົນຂວາຍມະຫາຊົນ ເຂົ້າຮ່ວມໃນພາລະກິດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເພື່ອເຮັດສຳເລັດໜ້າທີ່ການເມືອງອັນໃຫຍ່ຫຼວງດັ່ງກ່າວຈຳເປັນຕ້ອງມີລາຍຮັບທີ່ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການທີ່ຈຳເປັນ ແລະ ອີງໃສ່ເງື່ອນໄຂໃນໄລຍະໃໝ່ຄວນເປັນອົງການທີ່ບຸກທະລຸໃນລະດັບສູງ ຈາກການເປັນອົງການທີ່ເຄີຍຂໍ ມາສູ່ "ເປັນຜູ້ເອົາໃຫ້ປະຊາຊົນ ຫຼື ເປັນອົງການທີ່ສາມາດເພິ່ງ ແລະກຸ້ມຕົນເອງ".

(4). ເພື່ອໃຫ້ອົງການແນວລາວສ້າງຊາດ ສາມາດປະຕິບັດບົດບາດ ແລະຮັກສາມູນເຊື້ອອັນດີງາມ, ເປັນຫຼັກແຫຼ່ງແຫ່ງຄວາມສາມັກຄີປອງດອງ, ເປັນບ່ອນສົ່ງເສີມການສ້າງສາຍສຳພັນອັນດີກັບອົງການພາຄີ ແລະ ພີ່ນ້ອງຄົນເຊື້ອຊາດລາວຢູ່ຕ່າງປະເທດ, ລວມທັງການທູດປະຊາຊົນກັບປະເທດເພື່ອນມິດ; ຊ່ວຍເຫຼືອບັນເທົາທຸກຜູ້ທຸກຍາກດ້ອຍໂອກາດ, ປະຊາຊົນປັນດາເພິ່ງ, ສາສະໜາ, ຜູ້ມີຄຸນວຸດທິຂອງແຂວງ ແລະ ເມືອງທີ່ຍັງມີຄວາມຫຍຸ້ງຍາກ.

**ຂ. ຈຸດພິເສດ (ຄຸນລັກສະນະ) ຂອງກອງທຶນ ຫຼື ມູນນິທິແນວລາວສ້າງຊາດ.**

- ກອງທຶນ ຫຼື ມູນນິທິສາມັກຄີ ແລະ ພັດທະນາແນວລາວສ້າງຊາດ ແມ່ນກອງທຶນໜຶ່ງ ທີ່ແນວລາວສ້າງຊາດ ຂັ້ນຕ່າງໆ ເປັນຜູ້ສ້າງຕັ້ງຂຶ້ນ ດ້ວຍຄວາມສະໝັກໃຈພາຍໃຕ້ການຮ່ວມມືລະຫວ່າງ **ແນວລາວສ້າງຊາດ ກັບນັກທຸລະກິດ ແລະ ປະຊາຊົນ**, ເຊິ່ງມີຄຸນລັກສະນະສະເພາະແມ່ນປັນຈຸຈິດໃຈແຫ່ງ **"ຄວາມສາມັກຄີປອງດອງ ແລະ ການພັດທະນາ"** ໝາຍຄວາມວ່າ ກອງທຶນ ຫຼື ມູນນິທິນີ້ຈະເສີມສ້າງຄວາມສາມັກຄີປອງດອງ ແລະ ເຮັດໃຫ້ເກີດມີການພັດທະນາໃນຊຸມຊົນ (ບ້ານ) ຂອງປະຊາຊົນເຂດທຸກຍາກ ໂດຍແຕ່ລະພາກສ່ວນມີບົດບາດ ແລະ ໜ້າທີ່ ສະເພາະຂອງຕົນ.

- **ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ.**

+ **ແນວລາວສ້າງຊາດ**: ເປັນຜູ້ລິເລີ່ມໂຄງການ ຫຼື ກິດຈະການໃດໜຶ່ງ, ເປັນຜູ້ສະເໜີແນະນະໂຍບາຍ, ເປົ້າໝາຍຂອງໂຄງການ ຫຼື ກິດຈະກຳ, ເປັນຜູ້ປຸກລະດົມຂົນຂວາຍປະຊາຊົນ ແລະ ນັກທຸລະກິດ ເພື່ອເຂົ້າຮ່ວມ ແລະ ເປັນຜູ້ຊຸກຍູ້ການຈັດຕັ້ງພັກ-ລັດ ອຳນວຍຊ່ວຍເຫຼືອໂຄງການນັ້ນໆ.

+ **ນັກທຸລະກິດ:** ເປັນຜູ້ດຳເນີນໂຄງການ ແລະ ບໍລິຫານທຸລະກິດຕາມກົດໝາຍ, ສະໜອງວິຊາການ, ຝຶກອົບຮົມໃຫ້ແກ່ປະຊາຊົນ, ສະໜອງທຶນຮອນ, ວັດຖຸ ແລະ ຮັບຜິດຊອບຕະຫຼາດຈຳໜ່າຍ.

+ **ປະຊາຊົນ:** ເປັນຜູ້ສະໜອງເນື້ອທີ່ດິນ, ແຮງງານ ແລະ ປະກອບຫຸ້ນຕາມຄວາມສະໝັກໃຈເຂົ້າໃນໂຄງການຜະລິດເປັນສິນຄ້າ, ການທຸລະກິດ ບໍລິການກັບໄກຕະຫຼາດ.

**ຄ. ລາຍຮັບ-ລາຍຈ່າຍກອງທຶນ ຫຼື ມູນນິທິ:**

**- ລາຍຮັບກອງທຶນ ຫຼື ມູນນິທິ:**

+ ໄດ້ຈາກກຳໄລໃນການດຳເນີນກິດຈະກຳຮ່ວມທັງຈາກຫັກຕາມສັດສ່ວນການປະກອບຫຸ້ນ, ລາຍຮັບວິຊາການ ແລະ ຄ່າແຮງງານຂອງສະມາຊິກ ຕາມລະບຽບການ.

+ ການປະກອບຫຸ້ນຂອງສະມາຊິກ, ຂອງພາກລັດ ແລະ ເອກະຊົນ.

+ ລາຍຮັບຈາກການຊ່ວຍເຫຼືອຂອງອົງການຈັດຕັ້ງແນວລາວສ້າງຊາດ ແລະ ອົງການຈັດຕັ້ງສັງຄົມອື່ນໆ.

**- ລາຍຈ່າຍຂອງກອງທຶນ ຫຼື ມູນນິທິ:**

+ ຈ່າຍແບ່ງປັນຜົນໃຫ້ພາກສ່ວນຕ່າງໆ ຕາມອັດຕາສ່ວນຫຸ້ນ (%) ຂອງນັກທຸລະກິດ, ປະຊາຊົນ ແລະ ແນວລາວສ້າງຊາດ.

+ ຈ່າຍລົງທຶນໃໝ່ຕາມກົນໄກຕະຫຼາດ;

+ ຈ່າຍເຂົ້າໃນການສະໜັບສະໜູນການເຄື່ອນໄຫວວຽກງານຂອງກຳມະການ, ທີ່ປຶກສາ, ຄູ່ຮ່ວມງານ ແລະ ພະນັກງານຂອງແນວລາວສ້າງຊາດ ເພື່ອປະຕິບັດ**ໂຄງການພັດທະນາ ແລະ ສ້າງຄວາມສາມັກຄີປອງດອງຂອງຊຸມຊົນໃດໜຶ່ງ**; ວຽກງານສ້າງຄວາມເຂັ້ມແຂງໃຫ້ອົງການແນວລາວສ້າງຊາດ (ການຈັດຝຶກອົບຮົມ, ປະກອບອຸປະກອນວິຊາການ, ການທັດສະນະສຶກສາ, ການສ້າງລາຍຮັບສຳພັນກັບພີ່ນ້ອງຄົນລາວຢູ່ຕ່າງປະເທດ ແລະ ອື່ນໆທີ່ມີຄວາມຈຳເປັນ.

໗. ນະໂຍບາຍ, ຫຼັກການ ແລະ ລະບຽບການຂອງກອງທຶນ ຫຼື ມູນນິທິ

1. ນະໂຍບາຍ:

(1) ສູນກາງແນວລາວສ້າງຊາດ ມີນະໂຍບາຍຊຸກຍູ້ ແລະ ສົ່ງເສີມໃຫ້ອົງການແນວລາວສ້າງຊາດ ຂັ້ນທ້ອງຖິ່ນ ທີ່ຍັງມີປະຊາຊົນທີ່ທຸກຍາກໃນອັດຕາສ່ວນສູງ, ລາຍຮັບຂອງທ້ອງຖິ່ນຂາດດຸນສູງ, ການປະຕິບັດງົບປະມານບໍ່ເຄີຍເກີນແຜນ ໃຫ້ສ້າງຕັ້ງກອງທຶນ ຫຼື ມູນນິທິສາມັກຄີ ແລະ ພັດທະນາແນວລາວສ້າງຊາດ ຕາມເງື່ອນໄຂຕົວຈິງຢູ່ທ້ອງຖິ່ນຂອງຕົນ, ໂດຍໃນເບື້ອງຕົ້ນສູນກາງແນວລາວສ້າງຊາດ ແລະ ອົງການປົກຄອງທ້ອງຖິ່ນເປັນຜູ້ສະໜອງທຶນສ່ວນໃດໜຶ່ງຕາມຄວາມສາມາດຕົວຈິງ ແລະ ກອງທຶນ ຫຼື ມູນນິທິບ່ອນນັ້ນເປັນຜູ້ໃຊ້ແທນຄືນ ແລະ ຮັບຜິດຊອບຕາມກົດໝາຍເງິນກູ້ ຫຼື ການລົງທຶນຂອງລັດໂດຍກົງ.

(2) ກອງທຶນ ຫຼື ມູນນິທິສາມັກຄີ ແລະ ພັດທະນາແນວລາວສ້າງຊາດ ເຄື່ອນໄຫວຕາມຈິດໃຈສ້າງການຫັນປ່ຽນໃໝ່ ແລະ ເປັນເຈົ້າຕົນເອງ, ກຸ້ມຕົນເອງດ້ານການເງິນ, ການສ້າງລາຍຮັບ-ລາຍຈ່າຍ ໂດຍອົງການແນວລາວສ້າງຊາດ ແລະ ອົງການປົກຄອງທ້ອງຖິ່ນນັ້ນໆ ເປັນຜູ້ອຳນວຍຄວາມສະດວກ ແລະ ຊ່ວຍໜູນແກ້ໄຂອຸປະສັກ ໃນການເຄື່ອນໄຫວຂອງກອງທຶນ.

(3) ອົງການແນວລາວສ້າງຊາດແຕ່ລະຂັ້ນຊ່ວຍອຳນວຍຄວາມສະດວກໃຫ້ກອງທຶນ ຫຼື ມູນນິທິ ເພື່ອລະດົມສະມາຊິກ, ທຶນຈາກແຫຼ່ງຕ່າງໆ ແລະມູນນິທິ ທັງພາຍໃນ ແລະຕ່າງປະເທດ ຕາມລະບຽບກົດໝາຍ.

(4) ການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ ທີ່ປະກອບສ່ວນ ແລະ ເຄື່ອນໄຫວວຽກງານກອງທຶນ ຫຼື ມູນນິທິສາມັກຄີ ແລະ ພັດທະນາແນວລາວສ້າງຊາດໄດ້ດີ, ແນວລາວສ້າງຊາດແຕ່ລະຂັ້ນຈະຄົ້ນຄວ້ານຳສະເໜີອົງການອຳນາດລັດທີ່ກ່ຽວຂ້ອງໃຫ້ການຍ້ອງຍໍຕາມລະບຽບການ.

**2. ຫຼັກການສ້າງຕັ້ງກອງທຶນ:**

(1) ກອງທຶນສາມັກຄີ ແລະ ພັດທະນາ ສ້າງຕັ້ງຂຶ້ນຕາມການສະໝັກໃຈຂອງປະຊາຊົນ, ນັກທຸລະກິດ ແລະ ຄະນະກຳມະການແນວລາວສ້າງຊາດ ຂັ້ນນັ້ນໆ, ຮັບປະກັນການເຄື່ອນໄຫວພາຍໃຕ້

ຈຸດປະສົງທີ່ກຳນົດໄວ້ ແລະ ສອດຄ່ອງຕາມກົດລະບຽບຂອງກອງທຶນ; ມີປະສິດທິພົນ ແລະ ມີຄວາມຍືນຍົງ, ທັງ ຮັບປະກັນຄວາມຄ່ອງຕົວ, ໂປ່ງໃສ ແລະ ຍຸຕິທຳ ໃນການນຳໃຊ້ທຶນ.

(2) ທຸກການເຄື່ອນໄຫວຂອງກອງທຶນຕ້ອງມີການນຳພາ, ຕິດຕາມ, ກວດກາ ແລະ ປະເມີນຜົນ ຢ່າງເປັນລະບົບປົກກະຕິ.

(3) ຮັບປະກັນດ້ານຜົນປະໂຫຍດ ແລະ ຄວາມສາມັກຄີລະຫວ່າງແນວລາວສ້າງຊາດ, ນັກທຸລະກິດ ແລະ ປະຊາຊົນ.

(4) ການສ້າງຕັ້ງມູນນິທິສາມັກຄີ ແລະ ພັດທະນາ ໃຫ້ປະຕິບັດຕາມດຳລັດວ່າດ້ວຍມູນນິທິ ສະບັບເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011, ໝວດທີ III, ມາດຕາ 12.

3. ລະບຽບການຂອງກອງທຶນ:

ກອງທຶນ ຫຼື ມູນນິທິສາມັກຄີ ແລະ ພັດທະນາ ແນວລາວສ້າງຊາດ ຂັ້ນໃດແມ່ນໃຫ້ແນວລາວສ້າງຊາດ ຂັ້ນນັ້ນສົມທົບພາກສ່ວນກ່ຽວຂ້ອງກຳນົດລັກສະນະ, ປະເພດ ແລະ ກົດລະບຽບຂອງກອງທຶນ ຫຼື ມູນນິທິ ຕາມສະພາບເງື່ອນໄຂຕົວຈິງຂອງແຕ່ລະຂັ້ນ ແລະ ທ້ອງຖິ່ນຕ່າງໆ ໂດຍໃຫ້ສອດຄ່ອງກັບ ກົດລະບຽບຂອງແນວລາວສ້າງຊາດ, ດຳລັດວ່າດ້ວຍມູນນິທິ ສະບັບເລກທີ 149/ນຍ ໝວດທີ III, ມາດຕາ 15, ຄວາມສາມາດປະຕິບັດ ແລະ ມະຕິສະບັບນີ້.

## ຈ. ຂັ້ນຕອນ, ປະເພດ, ຮູບການ ແລະ ຂະໜາດຂອງກອງທຶນສາມັກຄີ ແລະ ພັດທະນາຂອງແນວລາວສ້າງຊາດ:

**1.** ຂັ້ນຕອນ: ໃຫ້ປະຕິບັດຢ່າງງ່າຍດາຍ ແລະ ຮັບປະກັນສິດເປັນເຈົ້າຂອງກອງທຶນ ໃນນັ້ນ, ໃຫ້ເອົາໃຈໃສ່: ຂະບວນການກະກຽມ, ການສຶກສາຄົ້ນຄວ້າຄວາມເປັນໄປໄດ້, ຂັ້ນຕອນການອອກນິຕິກຳສ້າງຕັ້ງກອງທຶນ, ການເຄື່ອນໄຫວດຳເນີນໂຄງການ ແລະ ການປະເມີນຜົນຂອງກອງທຶນ.

2. ປະເພດ ແລະ ຮູບການ:

+ ປະເພດ ແລະ ຮູບການດ້ານກະເສດ: (ຕົວຢ່າງ: ຮ່ວມມືກັນລະຫວ່າງ ສູນກາງແນວລາວສ້າງຊາດ, ບໍລິສັດ ແລະ ປະຊາຊົນ ຕາມຕົວແບບຂອງກຸ່ມບໍລິສັດພົງສະຫວັນ ສ້າງຂຶ້ນຢູ່ເມືອງລ້ອງຊານ, ແຂວງໄຊສົມບູນ; ບ້ານດົງຄຳໝື່ນ, ເມືອງຈຳພອນ, ແຂວງສະຫວັນນະເຂດ ແລະ ແຂວງອື່ນໆ).

+ ປະເພດ ແລະ ຮູບການດ້ານໂຮງງານຊ່າງອຸດສາຫະກຳຂະໜາດນ້ອຍ ຫຼື ກາງ (SME) ເພື່ອຫາລາຍໄດ້ ຕາມກົດໝາຍ, ເພື່ອອົງການ ແລະ ພະນັກງານແນວລາວສ້າງຊາດຂັ້ນຕ່າງໆ ມີລາຍຮັບເພີ່ມເຕີມຊ່ວຍໜູນໃນການເຄື່ອນໄຫວດີຂຶ້ນ.

+ ປະເພດ ແລະ ຮູບການດ້ານບໍລິການ: ໂຮງແຮມ, ການທ່ອງທ່ຽວ, ຮ້ານອາຫານ, ໂຮງໝໍ, ການໃຫ້ເຊົ່າພາຫະນະ, ອຸປະກອນກົນຈັກ, ສູນຈຳໜ່າຍຜະລິດຕະພັນກະສິກຳສາມັກຄີ-ພັດທະນາ ແລະ ອື່ນໆ (ປະຕິບັດຕາມກົດໝາຍ ແລະດຳລັດ SME).

+ ປະເພດ ແລະ ຮູບການສ້າງກອງທຶນຈາກລາຍຮັບດ້ານວິຊາການ: (ເປັນກອງທຶນທີ່ສ້າງລາຍຮັບຈາກການເຄື່ອນໄຫວຂອງພະນັກງານບຳນານ, ກຳມະການ, ຄູ່ຮ່ວມງານ ລວມທັງພະນັກງານ, ລັດຖະກອນ

ຂອງແນວລາວສ້າງຊາດແຕ່ລະຂັ້ນ) ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການສ້າງລາຍຮັບວິຊາການ ຕາມມາດຕາ 8 ຂອງກົດໝາຍງົບປະມານ (ຈັດຮັບ-ຈັດຈ່າຍ).

### 3. ຂະໜາດກອງທຶນ

ການຈັດແບ່ງຂະໜາດກອງທຶນ ປະກອບມີ 3 ລະດັບ: ລະດັບໃຫຍ່ ຫຼາຍກວ່າ 20 ຕື້ກີບ, ລະດັບກາງ ໜ້ອຍກວ່າ 20 ຕື້ກີບລົງມາຫາ 5 ຕື້ກີບ ແລະຂະໜາດໜ້ອຍທຸດ 5 ຕື້ກີບລົງໄປ ໂດຍອີງໃສ່ທຶນຄົງທີ່, ທຶນໝູນວຽນ, ມູນຄ່າຊັບສິນ, ໂຄງປະກອບແຮງງານ, ຍອດລາຍຮັບ ແລະ ກຳໄລປະຈຳປີ.

## IV. ການຈັດຕັ້ງປະຕິບັດມະຕິກ່ຽວກັບການສ້າງລາຍຮັບພື້ນ ແລະ ກອງທຶນສາມັກຄີ ແລະ ພັດທະນາ ແນວລາວສ້າງຊາດ.

1) ຄະນະປະຈຳແນວລາວສ້າງຊາດ ແຕ່ລະຂັ້ນເປັນເຈົ້າການເຊື່ອມຊຶມ, ກຳແໜ້ນເນື້ອໃນສຳຄັນຂອງມະຕິສະບັບນີ້, ພ້ອມທັງຊີ້ນຳການຈັດຕັ້ງຜັນຂະຫຍາຍຕົວຈິງຕາມສິດ ແລະ ໜ້າທີ່ ຂອງຕົນຢ່າງແທດເຖິງ.

2) ກຳມະການແນວລາວສ້າງຊາດ, ທີ່ປຶກສາ, ຄູ່ຮ່ວມງານ ແລະ ພະນັກງານ-ລັດຖະກອນ ຂອງແນວລາວສ້າງຊາດ ແຕ່ລະຂັ້ນ ຕ້ອງຖືເອົາມະຕິສະບັບນີ້ໃຫ້ເປັນແຜນວຽກ, ໜ້າທີ່ໃນຄວາມຮັບຜິດຊອບຂອງຕົນ.

3) ຄະນະທີ່ປຶກສາວຽກງານຕ່າງໆ, ຫ້ອງການ, ກົມ, ສູນຝຶກອົບຮົມ ແລະ ພະນັກງານແນວລາວສ້າງຊາດແຕ່ລະຂັ້ນ ມີຄວາມຮັບຜິດຊອບເປັນເສນາທິການໃຫ້ຄະນະປະຈຳແນວລາວສ້າງຊາດ ໃນການໃຫ້ຄຳປຶກສາເພື່ອຜັນຂະຫຍາຍມະຕິສະບັບນີ້ໃຫ້ຖືກແທດກັບຕົວຈິງໃນແຕ່ລະທ້ອງຖິ່ນ.

4) ໃຫ້ສະເໜີສູນກາງພັກ, ລັດຖະບານ ອອກມະຕິເພີ່ມເຕີມ ແລະ ເພີ່ມທະວີການປະສານຮ່ວມມືກັບອົງການພາຄີ, ຄະນະພັກ, ອົງການປົກຄອງທຸກຂັ້ນ ເພື່ອໃຫ້ອົງການເຫຼົ່ານັ້ນອຳນວຍຄວາມສະດວກ ຕໍ່ການເຄື່ອນໄຫວສ້າງລາຍຮັບເພີ່ມເຕີມ ແລະ ກອງທຶນສາມັກຄີ-ພັດທະນາຂອງແນວລາວສ້າງຊາດໃຫ້ໄດ້ຮັບຜົນດີ.

5) ມອບໃຫ້ຄະນະກວດກາວຽກງານຂອງແນວລາວສ້າງຊາດ ເປັນເສນາທິການຊ່ວຍໃນການຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດມະຕິສະບັບນີ້ ແລະ ລາຍງານໃຫ້ຄະນະປະຈຳສູນກາງແນວລາວສ້າງຊາດ ຮັບຊາບ ແລະ ຊີ້ນຳເປັນປົກກະຕິໃນແຕ່ລະໄລຍະ.

**ຄະນະປະຈຳສູນກາງແນວລາວສ້າງຊາດ**

**ປະທານ**

**ປອ.ສິນລະວົງ ຄູດໄພທູນ**